# ໜ້າຈໍແນະນຳທີ່ພາດຫົວຂໍ້ດ້ວຍຕົວອັກສອນໃຫ່ຍແມ່ນຫຍັງ?

## ແລະ ມີປະໂຫຍດຊ່ວຍຂັດຂວາງຜູ້ລະເມີດທາງເພດເດັກໃນອິນເຕີເນັດ

### ຂໍ້ມູນຕົວຈິງ

- ໜ້າຈໍແນະນຳທີ່ພາດຫົວຂໍ້ດ້ວຍຕົວອັກສອນໃຫ່ຍຈະຖືກນຳໃຊ້ເພື່ອດຶງຄວາມສົນໃຈຂອງຜູ້ຊົມໃຊ້, ສະແດງຂໍ້ຄວາມ ຫຼື ນຳພາຜູ້ຊົມໃຊ້ໄປສູ່ໜ້າເວັບອື່ນ
- ໜ້າຈໍແນະນຳທີ່ພາດຫົວຂໍ້ດ້ວຍຕົວອັກສອນໃຫ່ຍຈະຖືກນຳໃຊ້ໂດຍອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ, ອຸດສະຫະກຳ ແລະ ໜ່ວຍງານບັງຄັບໃຊ້ກົດໝາຍ
- ເມື່ອໜ້າຈໍແນະນຳທີ່ພາດຫົວຂໍ້ດ້ວຍຕົວອັກສອນໃຫ່ຍຖືກນຳໃຊ້ເຂົ້າໃນການສະກັດກັ້ນຜູ້ຊົມໃຊ້ຈາກການເຂົ້າເຖິງເນື້ອໃນໃດໜຶ່ງ, ໜ້າດັ່ງກ່າວຈະຖືກເອີ້ນວ່າ 'ໜ້າຈໍສຳລັບສະກັດກັ້ນ'

## ໜ້າຈໍແນະນຳທີ່ພາດຫົວຂໍ້ດ້ວຍຕົວອັກສອນໃຫຍ່ນັ້ນຖືກນຳໃຊ້ແນວໃດ?

ໜ້າຈໍແນະນຳແມ່ນໜ້າ ຫຼື ຮູບພາບທີ່ປະກົດຂຶ້ນທົ່ວຈໍພາບ ຫຼື ສ່ວນໃດໜຶ່ງຂອງຈໍພາບ ໃນຂະນະທີ່ໜ້າເວັບໄຊທີ່ຜູ້ໃຊ້ອິນເຕີເນັດຕ້ອງການເຂົ້າຫາກຳລັງໂຫຼດຢູ່.

ຜູ້ຊົມໃຊ້ສາມາດນຳໃຊ້ໜ້າຈໍແນະນຳທີ່ພາດຫົວຂໍ້ດ້ວຍຕົວອັກສອນໃຫ່ຍສຳລັບຈຸດປະສົງທຸກຮູບແບບ ເນື່ອງຈາກນີ້ຄືວິທີການເພີ່ມຂໍ້ມູນເຂົ້າໃນໜ້າເວັບໄຊໃດໜຶ່ງ. ຜູ້ໂຄສະນາສ່ວນໃຫຍ່ຈະນຳໃຊ້ໜ້າແນະນຳທີ່ພາດຫົວຂໍ້ດ້ວຍຕົວອັກສອນໃຫ່ຍເພື່ອດຶງດູດຄວາມສົນໃຈຂອງຜູ້ຊົມໃຊ້ ຫຼື ນຳໃຊ້ເພື່ອບອກທ່ານວ່າທ່ານພິມທີ່ຢູ່ເວັບໄຊຜິດ ຫຼື ເວັບໄຊທີ່ທ່ານຊອກຫາບໍ່ມີແລ້ວ.

ນອກນັ້ນໜ້າຈໍແນະນຳທີ່ພາດຫົວຂໍ້ດ້ວຍຕົວອັກສອນໃຫ່ຍຍັງຖືກນຳໃຊ້ໃນການປົກປ້ອງຜູ້ຊົມໃຊ້ຈາກເນື້ອໃນສະເພາະໃດໜຶ່ງ. ຕົວຢ່າງ, ໜ້າແນະນຳທີ່ພາດຫົວຂໍ້ດ້ວຍຕົວອັກສອນໃຫ່ຍອາດຈະປະກົດຂຶ້ນ ເມື່ອບຸກຄົນໃດໜຶ່ງພະຍາຍາມທີ່ຈະເຂົ້າເຖິງສິ່ງທີ່ສື່ເຖິງການທາລຸນທາງເພດເດັກ ແລະ ຈະຂັດຂວາງຊ່ອງທາງໃນການເຂົ້າເຖິງເນື້ອໃນທີ່ຕ້ອງການນັ້ນ ເຊິ່ງເປັນຂັ້ນຕອນສຸດທ້າຍໃນແຜນການຂັດຂວາງ ທີ່ປະກອບດ້ວຍການກັ່ນຕອງ ແລະ ສະກັດກັ້ນຂໍ້ມູນ*.




* ສຳລັບຂໍ້ມູນເພີ່ມເຕີມ ໃຫ້ເບິ່ງເອກະສານໃຫ້ຂໍ້ມູນຕົວຈິງ: ການກັ່ນຕອງ ແລະ ສະກັດກັ້ນຂໍ້ມູນທີ່ບໍ່ເໝາະສົມ

## ປະຕິເສດການເຂົ້າເຖິງສິ່ງທີ່ສື່ເຖິງການທາລຸນທາງເພດເດັກ

ບາງບໍລິສັດໂດຍສະເພາະແມ່ນ ບໍລິສັດ ໄມໂຄຣຊອບ ແລະ ກູໂກ ຈະນຳໃຊ້ໜ້າຈໍແນະນຳທີ່ພາດຫົວຂໍ້ດ້ວຍຕົວອັກສອນໃຫ່ຍ - ເຂົ້າໃນໜ້າຈໍຄົ້ນຫາຂອງເວັບໄຊພວກເຂົາ ຊຶ່ງເປັນສ່ວນໜຶ່ງຂອງແຜນງານເພື່ອສະກັດກັ້ນຜູ້ຊົມໃຊ້ຈາກການເຂົ້າເຖິງສິ່ງທີ່ສື່ເຖິງການທາລຸນທາງເພດເດັກໃນອິນເຕີເນັດໂດຍຕັ້ງໃຈ ຫຼື ໂດຍບໍ່ຕັ້ງໃຈ. ເມື່ອໃດກໍ່ຕາມທີ່ບຸກຄົນໃດໜຶ່ງພະຍາຍາມເຂົ້າເຖິງໜ້າຈໍເວັບທີ່ປະກອບດ້ວຍສິ່ງທີ່ສື່ເຖິງການທາລຸນທາງເພດດັ່ງກ່າວ, ຜູ້ຊົມໃຊ້ຈະຖືກປະຕິເສດບໍ່ໃຫ້ເຂົ້າເຖິງເວັບໄຊ. ເມື່ອມີການນຳໃຊ້ໜ້າຈໍແນະນຳ, ຜູ້ຊົມໃຊ້ຈະຖືກແນະນຳໜ້າທີ່ມີຂໍ້ຄວາມຂັດຂວາງນັ້ນແທນ.

ໜ້າຈໍແນະນຳທີ່ພາດຫົວຂໍ້ດ້ວຍຕົວອັກສອນໃຫ່ຍປະກອບດ້ວຍຂໍ້ມູນທີ່ແຕກຕ່າງກັນໄປ. ໜ້າຈໍແນະນຳທີ່ພາດຫົວຂໍ້ດ້ວຍຕົວອັກສອນໃຫ່ຍຮູບແບບທີ່ງ່າຍທີ່ສຸດປະກອບດ້ວຍຂໍ້ຄວາມທີ່ປະຕິເສດການເຂົ້າສູ່ເວັບໄຊດັ່ງກ່າວ. ຂໍ້ຄວາມດັ່ງກ່າວເອີ້ນວ່າຂໍ້ຄວາມຜິດພາດ ຫຼື ຂໍ້ຄວາມເລກທີ 404. ໜ້າຈໍແນະນຳທີ່ພາດຫົວຂໍ້ດ້ວຍຕົວອັກສອນໃຫ່ຍອາດຈະປະກອບດ້ວຍຂໍ້ມູນເພີ່ມເຕີມວ່າເປັນຫຍັງການເຂົ້າເວັບໄຊໃດໜຶ່ງຈຶ່ງຖືກຂັດຂວາງ (ໂດຍມີ ຫຼື ບໍ່ມີຂໍ້ມູນກ່ຽວກັບນິຕິກຳທີ່ກ່ຽວຂ້ອງ). ຂໍ້ມູນເຫຼົ່ານີ້ແມ່ນອົງປະກອບເພີ່ມເຕີມ ໂດຍການອ້າງອີງເຖິງແຫຼ່ງໃຫ້ຄວາມຊ່ວຍເຫຼືອ ຫຼື ຄຳແນະນຳ ຖ້າພວກເຂົາມີຄວາມກັງວົນກ່ຽວກັບຄວາມຮູ້ສຶກທາງເພດຮ່ວມກັບຂອງພວກເຂົາ.

ນອກຈາກນັ້ນ ໜ້າຈໍແນະນຳທີ່ພາດຫົວຂໍ້ດ້ວຍຕົວອັກສອນໃຫ່ຍຍັງປະກອບດ້ວຍຄຳເຕືອນ ຫຼື ຂໍ້ຄວາມທີ່ຈະແຈ້ງ ເຊິ່ງອະທິບາຍກ່ຽວກັບການກະທຳຂອງຜູ້ຊົມໃຊ້ ຫຼື ເນື້ອໃນທີ່ຄົ້ນຫາທີ່ຂັດກັບກົດໝາຍ. ສຳລັບຜູ້ຊົມໃຊ້ທີ່ບໍ່ເຫັນດີກັບເນື້ອໃນສະເພາະໃດໜຶ່ງທີ່ຖືກກີດຂວາງ,ບາງຄັ້ງໜ້າຈໍແນະນຳກໍ່ອາດຈະປະກອບດ້ວຍຂໍ້ມູນກ່ຽວກັບວິທີການສົ່ງຄຳຮ້ອງທຸກກ່ຽວກັບການຖືກປະຕິເສດບໍ່ໃຫ້ເຂົ້າສູ່ເວັບໄຊໃດໜຶ່ງ. ສຸດທ້າຍນີ້, ໜ້າຈໍແນະນຳທີ່ພາດຫົວຂໍ້ດ້ວຍຕົວອັກສອນໃຫ່ຍບາງໜ້າຍັງປະກອບດ້ວຍຂໍ້ມູນ ແລະ/ຫຼື ການຕິດຕໍ່ຫາສາຍດ່ວນ ທີ່ສ້າງຂຶ້ນເພື່ອລາຍງານເນື້ອໃນຂອງການທາລຸນທາງເພດເດັກໃນອິນເຕີເນັດ.

ໂດຍການສະໜອງຂໍ້ມູນດັ່ງກ່າວນັ້ນ, ໜ້າຈໍແນະນຳທີ່ພາດຫົວຂໍ້ດ້ວຍຕົວອັກສອນໃຫ່ຍສາມາດຊ່ວຍໃຫ້ຄວາມຮູ້ກ່ຽວກັບການຂັດກັບກົດໝາຍຂອງສິ່ງທີ່ສື່ເຖິງການທາລຸນທາງເພດເດັກ ແລະ ການກະທຳທີ່ກ່ຽວຂ້ອງ. ນອກຈາກນັ້ນ ໜ້າຈໍແນະນຳທີ່ພາດຫົວຂໍ້ດ້ວຍຕົວອັກສອນໃຫ່ຍຍັງຊ່ວຍສ້າງຄວາມເຂົ້າໃຈ ແລະ ນຳພາຜູ້ຊົມໃຊ້ໄປສູ່ແຫຼ່ງໃຫ້ຄວາມຊ່ວຍເຫຼືອ. ໜ້າຈໍແນະນຳທີ່ພາດຫົວຂໍ້ດ້ວຍຕົວອັກສອນໃຫ່ຍຊ່ວຍສ້າງສະພາບແວດລ້ອມໃນອິນເຕີເນັດທີ່ມີຄວາມປອດໄພຂຶ້ນ ໂດຍການອົບຮົມຜູ້ຊົມໃຊ້ກ່ຽວກັບກົນໄກສຳລັບການລາຍງານ ແລະ ໂດຍການສະກັດກັ້ນການເຂົ້າສູ່ເນື້ອໃນທີ່ສື່ເຖິງການທາລຸນທາງເພດເດັກ ໂດຍທີ່ບໍ່ຕ້ອງການດັ່ງກ່າວ. ສິ່ງທີ່ສຳຄັນທີ່ສຸດ, ໜ້າຈໍແນະນຳທີ່ພາດຫົວຂໍ້ດ້ວຍຕົວອັກສອນໃຫ່ຍຂັດຂວາງຜູ້ຊົມໃຊ້ຈາກການເຂົ້າເຖິງສິ່ງທີ່ສື່ເຖິງການທາລຸນທາງເພດເດັກ.

ເອກະສານຂໍ້ມູນຕົວຈິງສະບັບນີ້ໄດ້ຮັບການພັດທະນາໂດຍອົງການ ECPAT ສາກົນ. ສະໜັບສະໜູນການແປພາສາ ແລະ ການຜະລິດໂດຍອົງການສປຊ ສຳລັບເດັກ